**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ພະແນກສາທາລະນະສຸກແຂວງ

ໂຮງຮຽນສາທາລະນະສຸກອຸດົມໄຊ ເລກທີ່ ....../ຮສອຊ

ອຸດົມໄຊ, ວັນທີ..... ສິງຫາ 2023

# ບົດບັນທຶກ

# ກອງປະຊຸມສະພາບໍລິຫານ ໂຮງຮຽນສາທາລະນະສຸກອຸດົມໄຊ

**ອີງຕາມ** ກົດລະບຽບຂອງໂຮງຮຽນສາທາລະນະສຸກອຸດົມໄຊ ສະບັບເລກທີ 282/ຮສອຊ, ລົງວັນທີ 22 ມີນາ 2022;

**ອີງຕາມ** ບົດບັນທຶກຂອງສາມໜ່ວຍງານວ່າດ້ວຍການປະລະການຮໍ່າຂອງນັກສຶກສາຊັ້ນສູງຜະດຸງຄັນ(ສາຍກົງ) 6 ສະບັບເລກທີ່ 91/ໜຄສ ລົງວັນທີ 2 ມີນາ 2023;

**ອີງຕາມ** ບົດລາຍງານຄູປະຈໍາຫ້ອງວ່າດ້ວຍການສະຫຼະສິດການຮໍ່າຮຽນຂອງນັກສຶກສາຊັ້ນສູງພະຍາບານ(ສາຍກົງ) 8 ຄັ້ງວັນທີ 17 ສິງຫາ 2023;

**ອີງຕາມ** ບົດລາຍງາຍໂຈະການຮຽນຂອງນັກສຶກສາຊັ້ນສູງຜະດຸງຄັນ(ສາຍກົງ) 7 ຄັ້ງວັນທີ 23 ສິງຫາ 2023;

**ອີງຕາມ** ບົດລາຍງາຍໂຈະການຮຽນ ແລະ ສະຫຼະສິດຂອງນັກສຶກສາຊັ້ນສູງຜະດຸງຄັນ(ສາຍກົງ) 8 ຄັ້ງວັນທີ 23 ສິງຫາ 2023;

**ອີງຕາມ** ການເຫັນດີເປັນເອກະພາບຂອງຄະນະອໍານວຍການໂຮງຮຽນສາທາລະນະສຸກອຸດົມໄຊ ຄັ້ງວັນທີ 23 ສິງຫາ 2023.

ຕອນເຊົ້າ ເວລາ 8:30 ໂມງ ຂອງວັນທີ 25 ສິງຫາ 2023 ທີ່ຫ້ອງປະຊຸມໂຮງຮຽນສາທາລະນະສຸກອຸດົມໄຊ ໄດ້ເປີດກອງປະຊຸມວິສາມັນສະພາບໍລິຫານໂຮງຮຽນ ເພື່ອຄົ້ນຄວ້າບັນຫາການປະລະໜ້າທີການຮຽນຂອງນັກສຶກສາໂຮງຮຽນສາທາລະນະສຸກອຸດົມໄຊ, ພາຍໃຕ້ການເປັນປະທານ ຂອງທ່ານ ປທ ນາງ ຈັນມະລີ ອິນພູວຽງ ຮອງປະທານສະພາບໍລິຫານ, ຜູ້ອໍານວຍການໂຮງຮຽນ, ມີທ່ານ ປທ ອັກຄະເດດ ປິຍະເດຊ ຮອງຜູ້ອໍານວຍການໂຮງຮຽນ, ມີທ່ານ ນາງ ສຸກສາຄອນ ພູນທິລັກ ຄະນະອໍານວຍການໂຮງຮຽນ, ມີທ່ານ ນາງ ຈັນສະໝອນ ກຸລະເດດ ຄະນະອໍານວຍການໂຮງໝໍແຂວງອຸດົມໄຊ, ມີ ທ່ານ ນາງ ວັນເພັງ ມະນີໄຊ ຮອງຂະແໜງຈັດຕັ້ງ-ພະນັກງານພະແນກສາທາລະນະສຸກແຂວງ, ມີຄະນະກໍາມະການພາຍໃນໂຮງຮຽນ ແລະ ຕົວແທນຂອງອົງການຈັດຕັ້ງນັກສຶກສາເຂົ້າຮ່ວມ 19 ທ່ານ, ຍິງ 13 ທ່ານ (ລາຍລະອຽດມີໃບລົງທະບຽນຕິດຄັດດ້ານຫຼັງ).

## I. ຈຸດປະສົງ

ເພື່ອຄົ້ນຄວ້າ ແລະ ສະເໜີການແກ້ໄຂບັນຫາການສະຫຼະສິດ, ການໂຈະການຮຽນ ແລະ ການຜິດຕໍ່ລະບຽບການຄຸ້ມຄອງ-ການຮຽນການສອນຂອງນັກສຶກສາໂຮງຮຽນສາທາລະນະສຸກອຸດົມໄຊ

## II. ເນື້ອໃນ

ຄະນະຈັດຕັ້ງໄດ້ສະເໜີຈຸດປະສົງ ແລະ ຜ່ານຂໍ້ຕົກລົງ ວ່າດ້ວຍການອະນຸມັດເປີດກອງປະຊຸມສະພາບໍລິຫານ ຈາກນັ້ນ ອາຈານ ລັດດາ ສຸກມະນີໄຊ ຫົວໜ້າໜ່ວຍງານຄຸ້ມຄອງນັກສຶກສາ ໄດ້ຜ່ານບົດລາຍງານການຄ້າງຫ້ອງ,

ໂຈະການຮຽນຂອງນັກສຶກສາ ແລະ ສະຫຼະສິດການເປັນນັກສຶກສາ ຂອງນັກສຶກສາໂດຍຫຍໍ້ ລວມນັກສຶກສາທັງໝົດ 5 ຄົນ ດັ່ງນີ້:

**ນັກສຶກສາຜິດຕໍ່ລະບຽບການຮຽນ-ການສອນ 1 ຄົນ**

1. ນາງ ແກ້ວເພັດ ໄຊຍະລາດ ນັກສຶກສາຜະດຸງຄັນ (ສາຍກົງ) ຮຸ່ນທີ່ 6 ເຫດຜົນຄ້າງຫ້ອງ ຍ້ອນຜູ້ກ່ຽວຂາດລົງຝຶກປະຕິບັດໂຮງໝໍແຕ່ລະຕຶກ ແລະ ຝຶກປະຕິບັດໃນຊຸມຊົນ;

**ນັກສຶກສາຂໍໂຈະການຮຽນ 2 ຄົນ**

1. ນາງ ພອນ ຄໍາ ນັກສຶກສາຜະດຸງຄັນ (ສາຍກົງ) ຮຸ່ນທີ່ 7 ເຫດຜົນການໂຈະການຮຽນ ຍ້ອນສຸຂະພາບບໍ່ແຂງແຮງ (ແຂນຫັກ);
2. ນາງ ສາຍແກ້ວ ເລືອງມີໄຊ ນັກສຶກສາຜະດຸງຄັນຊັ້ນສູງ (ສາຍກົງ) ຮຸ່ນທີ່ 8 ເຫດຜົນການໂຈະການຮຽນ ຍ້ອນສະພາບຄອບຄົວມີຄວາມຫຍຸ້ງຍາກ (ເສດຖະກິດ).

**ນັກສຶກສາສະຫຼະສິດການຮຽນ 2 ຄົນ**

1. ນາງ ອິຫຼີ ເຈ້ຈອງ ນັກສຶກສາພະຍາບານຊັ້ນສູງ (ສາຍກົງ) ຮຸ່ນທີ່ 8 ເຫດຜົນການສະຫຼະສິດການຮຽນ ຍ້ອນຄອບຄົວກຽມຍົກຍ້າຍໄປຢູ່ຕ່າງປະເທດ (ປະເທດຈີນ);
2. ນາງ ມາລີ ດວງສຸລິຍາ ນັກສຶກສາຜະດຸງຄັນຊັ້ນສູງ (ສາຍກົງ) ຮຸ່ນທີ່ 8 ເຫດຜົນການສະຫຼະສິດການຮຽນ ຍ້ອນຄອບຄົວມີຄວາມຫຍຸ້ງຍາກທາງດ້ານເສດຖະກິດ.

ພາຍຫຼັງໄດ້ຮັບຟັງການລາຍງານສະພາບການເຄື່ອນໄຫວຂອງນັກສຶກສາໂດຍຫຍໍ້ ຜູ້ແທນກອງປະຊຸມ ໄດ້ປະກອບຄໍາຄິດຄໍາເຫັນຢ່າງກົງໄປກົງມາ ໂດຍອີງໃສ່ກົດລະບຽບວ່າດ້ວຍການຄຸ້ມຄອງການຮຽນ-ການສອນໂຮງຮຽນສາທາລະນະສຸກອຸດົມໄຊ ສະບັບເລກທີ 282/ຮສອຊ, ລົງວັນ ທີ 22 ມີນາ 2022 ໃນໝວດ 3 ວ່າດ້ວຍ ໜ້າທີ່, ພັນທະ ແລະ ຂອບເຂດສິດຂອງນັກສຶກສາ ມາດຕາ 25 ວ່າດ້ວຍການສິ້ນສຸດການເປັນນັກສຶກສາ, ຂໍ້ທີ 5 ລາອອກດ້ວຍເຫດຜົນຕ່າງໆ.

ເມື່ອອີງໃສ່ກົດລະບຽບ ຂອງໂຮງຮຽນແລ້ວນັກສຶກສາທັງ 5 ຄົນ ແມ່ນມີເງື່ອນໄຂຄົບຖ້ວນໃນການສະເໜີໃຫ້ເທິງໂຈະການຮຽນ, ການຄ້າງຫ້ອງ ແລະ ລຶບລ້າງລາຍຊື່ອອກຈາກການເປັນນັກສຶກສາໂຮງຮຽນສາທາລະນະສຸກອຸດົມໄຊ ຜ່ານການຄົ້ນຄວ້າປຶກສາຫາລື ພາຍໃນກອງປະຊຸມໄດ້ຕົກລົງເຫັນດີເປັນເອກະພາບກັນດັ່ງນີ້:

1. ນາງ ແກ້ວເພັດ ໄຊຍະລາດ ນັກສຶກສາຜະດຸງຄັນ (ສາຍກົງ) ຮຸ່ນທີ່ 6 ໃຫ້ຜູ້ກ່ຽວຄ້າງຫ້ອງ ແລະ ໃຫ້ມາລົງທະບຽນຮຽນຄືນທຸກວິຊາ ໃນສົກຮຽນ 2023-2024 (ປີທີ 3) ພ້ອມກັບຜະດຸງຄັນຊັ້ນສູງ (ສາຍກົງ) ຮຸ່ນທີ່ 7;
2. ນາງ ພອນ ຄໍາ ນັກສຶກສາຜະດຸງຄັນ (ສາຍກົງ) ຮຸ່ນທີ່ 7 ແລະ ນາງ ສາຍແກ້ວ ເລືອງມີໄຊ ນັກສຶກສາຜະດຸງຄັນຊັ້ນສູງ (ສາຍກົງ) ຮຸ່ນທີ່ 8 ສະເໜີຕໍ່ຂັ້ນເທິງອອກຂໍ້ຕົກລົງໂຈະການຮຽນຊົ່ວຄາວຂອງນັກສຶກສາຢູ່ໂຮງຮຽນສາທາລະນະລູກອຸດົມໄຊ;
3. ນາງ ອິຫຼີ ເຈ້ຈອງ ນັກສຶກສາພະຍາບານ (ສາຍກົງ) ຮຸ່ນທີ່ 8 ແລະ ນາງ ມາລີ ດວງສຸລິຍາ ນັກສຶກສາຜະດຸງຄັນຊັ້ນສູງ (ສາຍກົງ) ຮຸ່ນທີ່ 8 ສະເໜີຕໍ່ຂັ້ນເທິງອອກຂໍ້ຕົກລົງລຶບລ້າງລາຍຊື່ ອອກຈາກການເປັນນັກສຶກສາ ຂອງໂຮງຮຽນສາທາລະນະລູກອຸດົມໄຊ.

## III. ຄໍາເຫັນຊີ້ນໍາຂອງຄະນະປະທານ

1. ນັກສຶກສາທີ່ຂໍໂຈະການຮຽນຊົ່ວຄາວ ແລະ ຂໍສະຫຼະສິດການເປັນນັກສຶກສາທັງ 4 ຄົນ ແມ່ນເຫັນດີຕາມໃບຄຳຮ້ອງຂອງພວກກ່ຽວ;
2. ນັກສຶກສາທີ່ຜິດລະບຽບການຮຽນ-ການສອນຂອງໂຮງຮຽນ ແມ່ນເຫັນດີໃຫ້ຄ້າງຫ້ອງ ແລະ ໃຫ້ຜູ້ກ່ຽວລົງທະບຽນຮັກສາໜ່ວຍກິດຄືນ (ເມື່ອຮອດກຳນົດການຮຽນ ແຕ່ຜູ້ກ່ຽວບໍ່ມາລົງທະບຽນຮຽນພາຍໃນ 30 ວັນ ແມ່ນໝົດສິດໃນການເປັນນັກສຶກສາໂຮງຮຽນສາທາລະນະສຸກອຸດົມໄຊ);
3. ເໜີຕໍ່ກົມຈັດຕັ້ງ-ພະນັກງານ ກະຊວງສາທາລະນະສຸກ ເພື່ອໂຈະການສຶກສາຂອງນັກສຶກສາຢູ່ໂຮງຮຽນສາທາລະນະລູກອຸດົມໄຊ ຕາມລະບຽບການ;
4. ມອບໃຫ້ໜ່ວຍງານຄຸ້ມຄອງນັກສຶກສາ ປະກອບເອກະສານ ທີ່ກ່ຽວຂ້ອງໃຫ້ຖືກຕ້ອງຄົບຖ້ວນ ແລ້ວນຳສະເໜີຕໍ່ກົມຈັດຕັ້ງ-ພະນັກງານ ກະຊວງສາທາລະນະສຸກ ເພື່ອຂໍລຶບລ້າງລາຍຊື່ ອອກຈາກການເປັນນັກສຶກສາຂອງໂຮງຮຽນສາທາລະນະສຸກອຸດົມໄຊ ຕາມລະບຽບການ;
5. ພາຍຫຼັງໄດ້ຂໍ້ຕົກລົງຈາກກະຊວງສາທາລະນະສຸກແລ້ວ ແຈ້ງໃຫ້ພວກກ່ຽວ ແລະ ຜູ້ປົກຄອງຮັບຊາບບໍ່ໃຫ້ເກີນພາຍໃນ 15 ວັນ.

ກອງປະຊຸມ ໄດ້ດຳເນີນເປັນເວລາ 1 ຕອນ ຮອດເວລາ 11: 00 ໂມງຂອງວັນດຽວກັນ ແລະ ໄດ້ສ້າງບົດບັນທຶກສະບັບນີ້ ເພື່ອເປັນບ່ອນອີງໃຫ້ແກ່ການພິຈາລະນາຂອງຂັ້ນເທິງ.

**ຢັ້ງຢືນຈາກປະທານສະພາບໍລິຫານ**

**ຜູ້ອຳນວຍການໂຮງຮຽນ** **ຜູ້ບັນທຶກກອງປະຊຸມ**